ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 699 /ຈນວ
ວັນທີ 11 ພະຈິກ 2020.

# ຂໍ້ຕົກລົງ
# ວ່າດ້ວຍ ການສ້າງນະຄອນຫຼວງວຽງຈັນສີຂຽວ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ມາດຕາ 19, 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ຂອງກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງໃໝ່) ເລກທີ 64/ສພຊ, ລົງວັນທີ 13/06/2019, ມາດຕາ 6, ພາກທີ I ແລະ ມາດຕາ 60, ໝວດທີ 3, ພາກ II ກ່ຽວກັບການຄຸ້ມຄອງ ແລະ ການສົ່ງເສີມການປູກໄມ້;
- ອີງຕາມ ກົດໝາຍວ່າດວ້ຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ມາດຕາ 5, 7 ແລະ ມາດຕາ 13, ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຄູ່ມືແນະນຳການຈັດຕັ້ງປະຕິບັດວຽກງານ ຂຽວ ສະອາດງາມຕາ ສະບັບເລກທີ 1841/ກຊສ, ລົງວັນທີ 12 ເມສາ 2019;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ 023/ສປນວ, ລົງວັນທີ 28 ກໍລະກົດ 2020.
- ອີງຕາມ ໜັງສືສະເໜີຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 488 /ຫວນວ, ລົງວັນທີ 10 ພະຈິກ 2020.

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບວຽກງານການສ້າງນະຄອນຫຼວງວຽງຈັນສີຂຽວ ເພື່ອປົກປັກຮັກສາ, ບູລະນະຟື້ນຟູ ແລະ ປູກຕົ້ນໄມ້-ພືດສີຂຽວໃຫ້ມີຄວາມອຸດົມສົມບູນ ແນໃສ່ເຮັດໃຫ້ສິ່ງແວດລ້ອມທຳມະຊາດ ມີຄວາມສົມດູນ, ອາກາດມີຄຸນນະພາບດີ, ຫົ່ມເຢັນ ແລະ ສົດຊື່ນ, ສົ່ງເສີມການດຳລົງຊີວິດຂອງຊາວນະຄອນຫຼວງວຽງຈັນໃຫ້ມີຊີວິດ, ສຸຂະພາບທີ່ດີຂຶ້ນ ສ້າງນະຄອນຫຼວງວຽງຈັນ ໃຫ້ກາຍເປັນເມືອງສີຂຽວທີ່ໜ້າຢູ່, ມີພູມີທັດ ແລະ ທັດສະນີຍະພາບທີ່ສວຍງາມ ແລະ ເປັນນະຄອນຫຼວງທີ່ທັນສະໄໝ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ນິຍາມ**

ນະຄອນຫຼວງວຽງຈັນ ສີຂຽວ ແມ່ນນະຄອນທີ່ມີການປົກປັກຮັກສາພື້ນທີ່ສີຂຽວທໍາມະຊາດ ແລະ ເພີ່ມຄວາມໜາແໜ້ນຂອງພື້ນທີ່ສີຂຽວ ໃຫ້ນະຄອນຫຼວງວຽງຈັນ ລວມທັງເທດສະບານ ແລະ ຊານເມືອງ ໃຫ້ມີມາດຕະຖານຄົບຖ້ວນຕາມຕົວຊີ້ວັດຂອງນະຄອນສີຂຽວ ໂດຍໃຫ້ມີຕົ້ນໄມ້ເປັນແຫຼ່ງຜະລິດອົກຊີແຊນ ($O_2$), ດູດຊຶມອາຍກາກໂບນິກ ($CO_2$), ຫຼຸດຜ່ອນໝອກຄວັນ, ຝຸ່ນລະອອງ ແລະ ຄວາມຮ້ອນຂອງແສງແດດ.

**ມາດຕາ 3 ອະທິບາຍຄໍາສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເສັ້ນທາງສີຂຽວ** ໝາຍເຖິງລະບົບເສັ້ນທາງທີ່ມີການຕົບແຕ່ງດ້ວຍຕົ້ນໄມ້, ປູກຕົ້ນໄມ້ລຽບຕາມສອງຟາກທາງ, ຄູທາງທີ່ມີຕົ້ນໄມ້ປະດັບ ເພື່ອໃຫ້ຄວາມຮົ່ມເຢັນ ແລະ ສວຍງາມ;

2. **ບ້ານສີຂຽວ** ໝາຍເຖິງ ບ້ານທີ່ມີການປູກຕົ້ນໄມ້, ສ້າງເປັນສວນປູກສ່ວນບຸກຄົນ ແລະ ປູກເປັນສວນລວມຂອງບ້ານ;

3. **ສາທາລະນະ ສະຖານສີຂຽວ** ໝາຍເຖິງ ສໍານັກງານ, ຫ້ອງການພາກລັດ ແລະ ເອກະຊົນ, ໂຮງຮຽນວັດວາອາຮາມ, ໂຮງໝໍ, ໂຮງແຮມ, ຮ້ານອາຫານ, ລານຈອດລົດ ທີ່ມີສໍາປະສິດນໍາໃຊ້ທີ່ດິນເພື່ອສີຂຽວທີ່ປູກຕົ້ນໄມ້ໃຫ້ຮົ່ມ, ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ປະດັບ, ສວນດອກໄມ້, ເດີ່ນຫຍ້າ ແລະ ໂຖຕົ້ນໄມ້ປະດັບ ຕົບແຕ່ງທີ່ຂຽວສະອາດງາມຕາ;

4. **ທີ່ຢູ່ອາໄສ** ໝາຍເຖິງ ເຮືອນທີ່ຢູ່ອາໄສຂອງຄອບຄົວ, ຫໍພັກ, ອາພາດເມັ້ນ ແລະ ບ້ານຈັດສັນ ທີ່ມີສໍາປະສິດນໍາໃຊ້ພື້ນທີ່ສີຂຽວ ຕົບແຕ່ງໃຫ້ສະອາດງາມຕາ.

5. **ໂຮງຈັກ, ໂຮງງານສີຂຽວ** ໝາຍເຖິງ ໂຮງງານທີ່ໄດ້ປະຕິບັດຕາມລະບຽບ, ມີເຂດພັດທະນາທີ່ມີເນື້ອທີ່ສີຂຽວຢ່າງເປັນລະບົບ;

6. **ອາຍຄວັນ $CO_2$** ໝາຍເຖິງ ກາສຊະນິດໜຶ່ງ, ບໍ່ມີສີ ເຊິ່ງປະປົນຢູ່ໃນຊັ້ນບັນຍາກາດ ເກີດຈາກການເຜົາໄໝ້ໂດຍສົມບູນຂອງທາດ ຫຼື ສານອິນຊີ ເປັນກາສ ທີ່ໜັກກວ່າອາກາດ ເຊິ່ງເປັນອັນຕະລາຍຕໍ່ສຸຂະພາບ ແລະ ລະບົບທາງເດີນຫາຍໃຈ;

7. **ສໍາປະສິດ** ໝາຍເຖິງ ການນໍາໃຊ້ເນື້ອທີ່ດິນເພື່ອສີຂຽວ ທີ່ປູກຕົ້ນໄມ້ໃຫ້ຮົ່ມ, ຕົ້ນໄມ້ໃຫ້ໝາກ, ຕົ້ນໄມ້ປະດັບ, ສວນດອກໄມ້, ເດີ່ນຫຍ້າ ແລະ ໂຖຕົ້ນໄມ້ປະດັບຕາມສໍານັກງານ, ຫ້ອງການ, ໂຮງຮຽນ ເຮືອນພັກ, ວັດ ແລະ ສະຖານທີ່ຕ່າງໆ ຕົບແຕ່ງໃຫ້ເປັນສີຂຽວ;

8. **ອາກາດຊຸດໂຊມ** ໝາຍເຖິງ ອາກາດທີ່ປະປົນດ້ວຍສານພິດ ເຊິ່ງເປັນອັນຕະລາຍຕໍ່ສິ່ງທີ່ມີຊີວິດ, ສິ່ງແວດລ້ອມ, ທໍາລາຍສຸຂະພາບຂອງຄົນ ແລະ ສັດ;

9. **ມົນລະພິດ** ໝາຍເຖິງ ອາຍຄວັນກາກໂບນິກ, ອາຍຄວັນທີ່ເກີດຈາກລົດຍົນ ແລະ ເຄື່ອງກົນຈັກອື່ນໆ.

**ມາດຕາ 4 ນະໂຍບາຍກ່ຽວກັບ ການສ້າງນະຄອນຫຼວງວຽງຈັນສີຂຽວ**

ການສ້າງນະຄອນຫຼວງວຽງຈັນສີຂຽວມີນະໂຍບາຍດັ່ງນີ້:

1. ລັດຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນເຂົ້າໃນການສ້າງນະຄອນຫຼວງວຽງຈັນສີຂຽວ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-

ສັງຄົມ ຂອງນະຄອນຫຼວງວຽງຈັນ ແລະ ແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນ ຂອງນະຄອນຫຼວງວຽງຈັນ ແລະ ແຫ່ງຊາດ, ແຜນການນຳໃຊ້ທີ່ດິນແຕ່ລະປະເພດ ແລະ ຍຸດທະສາດປ່າໄມ້;

2. ລັດຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຄົ້ນຄວ້ານຳໃຊ້ເຕັກນິກ ແລະ ພູມປັນຍາຂອງທ້ອງຖິ່ນ ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາພື້ນທີ່ສີຂຽວໃຫ້ມີຄວາມອຸດົມສົມບູນ ແລະ ຍືນຍົງ ແນໃສ່ຍົກລະດັບຄຸນນະພາບຊີວິດ ແລະ ສຸຂະພາບຂອງພົນລະເມືອງໃຫ້ດີຂຶ້ນ;

3. ສົ່ງເສີມການລົງທຶນສ້າງສວນກ້າເບ້ຍໄມ້, ສວນພັນໄມ້ພື້ນເມືອງ, ການປູກຕົ້ນໄມ້, ຕົ້ນໄມ້ໃຫ້ໝາກ ແລະ ຕົ້ນໄມ້ປະດັບ ໃສ່ເຂດເນື້ອທີ່ດິນເປົ່າຫວ່າງ ແລະ ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍສອດຄ່ອງກັບມະຕິຕົກລົງຂອງອົງການປົກຄອງນະຄອນຫຼວງວຽງຈັນ ກ່ຽວກັບແຜນວຽກ ແລະ ມາດຕະການຈັດຕັ້ງປະຕິບັດໂຄງການສ້າງນະຄອນຫຼວງວຽງຈັນ ໃຫ້ເປັນເມືອງໜ້າຢູ່ 6 ສ, ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການພັດທະນານະຄອນຫຼວງວຽງຈັນໃນໄລຍະໃໝ່, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030 ແລະ ນະໂຍບາຍເພີ່ມອັດຕາຄວາມປົກຫຸ້ມສີຂຽວ ຂອງລັດຖະບານ.

**ມາດຕາ 5 ຫຼັກການກ່ຽວກັບການສ້າງນະຄອນຫຼວງວຽງຈັນ ສີຂຽວ**

ການສ້າງນະຄອນຫຼວງວຽງຈັນສີຂຽວ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການພັດທະນານະຄອນຫຼວງວຽງຈັນ ໃນໄລຍະໃໝ່, ມະຕິຂອງອົງການປົກຄອງນະຄອນຫຼວງວຽງຈັນ ໃຫ້ເປັນເມືອງໜ້າຢູ່ (6 ສ), ວິໄສທັດຮອດປີ 2030 ຂອງຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຍຸດທະສາດປ່າໄມ້, ກົດໝາຍ ແລະ ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ;

2. ສອດຄ່ອງກັບມາດຕະຖານ ການພັດທະນາຕົວເມືອງຂອງພາກພື້ນ ແລະ ສາກົນ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ແລະ ສັນຍາສາກົນ ດ້ານສິ່ງແວດລ້ອມ ທີ່ ສປປ ລາວ ເປັນພາຄີ;

3. ຄຸ້ມຄອງ, ປົກປັກຮັກສາ, ບູລະນະຟື້ນຟູ ແລະ ພັດທະນາພື້ນທີ່ສີຂຽວ ຢ່າງເອກະພາບ ແລະ ລວມສູນໃນທົ່ວນະຄອນຫຼວງວຽງຈັນ ເພື່ອຮັບປະກັນໃຫ້ພື້ນທີ່ສີຂຽວເພີ່ມຂຶ້ນ;

4. ຮັບປະກັນໃຫ້ນະຄອນຫຼວງວຽງຈັນມີພື້ນທີ່ສີຂຽວປົກຫຸ້ມ, ປົກປັກຮັກສາ, ບູລະນະຟື້ນຟູການປູກໄມ້ໃຫ້ອຸດົມສົມບູນ ຕາມທິດສີຂຽວ ແລະ ຍືນຍົງ ໂດຍມີການເຂົ້າຮ່ວມ ແລະ ຕື່ນຕົວສະໝັກໃຈ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;

5. ຮັບຜິດຊອບ ຕໍ່ຄວາມເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນໃນເຂດພື້ນທີ່ສີຂຽວ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ດຳລົງຊີວິດ ຢູ່ໃນຂອບເຂດນະຄອນຫຼວງວຽງຈັນ.

## ໝວດທີ 2
## ເປົ້າໝາຍຂອງການສ້າງນະຄອນຫຼວງວຽງຈັນສີຂຽວ

**ມາດຕາ 7 ເປົ້າໝາຍຂອງການສ້າງນະຄອນຫຼວງວຽງຈັນສີຂຽວ**

ແມ່ນການສ້າງບັນດາໂຄງລ່າງພື້ນຖານ ທີ່ຢູ່ໃນຂອບເຂດເທດສະບານ ແລະ ເຂດຊານເມືອງ ຂອງນະຄອນຫຼວງວຽງຈັນ ເພື່ອໃຫ້ເປັນພື້ນທີ່ສີຂຽວ ຕາມເປົ້າໝາຍດັ່ງນີ້:

1. ເສັ້ນທາງ;
2. ສາທາລະນະສະຖານ;
3. ທີ່ຢູ່ອາໄສ;
4. ສວນສາທາລະນະ;
5. ໂຮງຈັກ-ໂຮງງານ;
6. ສວນປູກຕົ້ນໄມ້ ແລະ ປ່າທຳມະຊາດ.

**ມາດຕາ 8 ເສັ້ນທາງ**

ເສັ້ນທາງ ທີ່ເປັນເປົ້າໝາຍຂອງການສ້າງນະຄອນຫຼວງວຽງຈັນສີຂຽວ ປະກອບມີ: ຖະໜົນສາຍເອກ ຖະໜົນສາຍຫຼັກ, ຖະໜົນສາຍເຊື່ອມຕໍ່, ຖະໜົນສາຍແຈກ ແລະ ທາງຮ່ອມ ທີ່ນອນຢູ່ໃນເຂດຕົວເມືອງ, ເຂດອ້ອມໃຈກາງເມືອງ, ເຂດຊານເມືອງ ແລະ ເຂດຂະຫຍາຍຕົວເມືອງ ຂອງນະຄອນຫຼວງວຽງຈັນ.

**ມາດຕາ 9 ສາທາລະນະສະຖານ**

ສຳນັກງານອົງການ ທີ່ເປັນເປົ້າໝາຍຂອງການສ້າງນະຄອນຫຼວງວຽງຈັນສີຂຽວ ປະກອບມີ: ສະຖານທີ່ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ເປັນຕົ້ນ ສຳນັກງານ, ຫ້ອງການຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ສະຖານີຂົນສົ່ງ, ສະໜາມບິນ, ສະຖານທີ່ທ່ອງທ່ຽວ, ວັດ, ໂບດ, ສາສະນະສະຖານ, ໂຮງແຮມ, ເຮືອນພັກ, ຣີສອດ ແລະ ຮ້ານອາຫານ.

**ມາດຕາ 10 ທີ່ຢູ່ອາໄສ**

ທີ່ຢູ່ອາໄສ ທີ່ເປັນເປົ້າໝາຍຂອງການສ້າງນະຄອນຫຼວງວຽງຈັນສີຂຽວ ປະກອບມີ: ເຮືອນ, ອາພາດເມັ້ນ, ບ້ານຈັດສັນທີ່ນອນຢູ່ໃນເຂດຕົວເມືອງ, ເຂດຊານເມືອງ ແລະ ເຂດຂະຫຍາຍຕົວເມືອງ ຂອງນະຄອນຫຼວງວຽງຈັນ.

**ມາດຕາ 11 ສວນສາທາລະນະ**

ສວນສາທາລະນະ ທີ່ເປັນເປົ້າໝາຍຂອງການສ້າງນະຄອນຫຼວງວຽງຈັນ ປະກອບມີ: ສວນສາທາລະນະ ທຸກຂະໜາດ ຊຶ່ງຢູ່ໃນຄວາມຮັບຜິດຊອບຂອງນະຄອນຫຼວງວຽງຈັນ ລວມທັງສວນສາທາລະນະ ທີ່ຢູ່ໃນການຄຸ້ມຄອງ ການນຳໃຊ້ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທັງພາຍໃນ ແລະ ຕ່າງປະເທດ ທີ່ນອນຢູ່ໃນເຂດຕົວເມືອງ, ເຂດຊານເມືອງ ແລະ ເຂດຂະຫຍາຍຕົວເມືອງ ຂອງນະຄອນຫຼວງວຽງຈັນ.

**ມາດຕາ 12 ໂຮງຈັກ-ໂຮງງານ**

ໂຮງຈັກ-ໂຮງງານ ແມ່ນບັນດາກິດຈະການດ້ານອຸດສາຫະກຳ ແລະ ຫົວໜ່ວຍທຸລະກິດຂອງຄອບຄົວ, ຂອງພາກລັດ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ລົງທຶນຢູ່ໃນນະຄອນຫຼວງວຽງຈັນ.

**ມາດຕາ 13 ສວນປູກໄມ້ ແລະ ປ່າທຳມະຊາດ**

ສວນປູກໄມ້ ແມ່ນພື້ນທີ່ສຳລັບປູກຕົ້ນໄມ້, ໄມ້ໃຫ້ໝາກ ແລະ ຕົ້ນໄມ້ປະດັບ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຢູ່ໃນນະຄອນຫຼວງວຽງຈັນ.

ປ່າທຳມະຊາດ ແມ່ນປ່າໄມ້ທີ່ເກີດຂຶ້ນເອງຕາມທຳມະຊາດ ເຊິ່ງລັດກຳນົດໃຫ້ເປັນປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ລວມທັງປ່າຊົມໃຊ້ຂອງບຸກຄົນ, ນິຕິບຸກຄົນ ທີ່ຢູ່ໃນນະຄອນຫຼວງວຽງຈັນ.

## ໝວດທີ 3
## ຕົວຊີ້ວັດໃນແຕ່ລະເປົ້າໝາຍຂອງການສ້າງນະຄອນຫຼວງວຽງຈັນສີຂຽວ

**ມາດຕາ 14 ຕົວຊີ້ວັດຂອງ ເສັ້ນທາງສີຂຽວ**

1. ມີການຈັດວາງແຜນຜັງການປູກຕົ້ນໄມ້, ໄມ້ປະດັບ ແລະ ສວນຫຍ້າ ຢ່າງເປັນລະບົບ;
2. ບົວລະບັດ, ຮັກສາຕົ້ນໄມ້ທີ່ມີຢູ່ແລ້ວລຽບຕາມເສັ້ນທາງ ໃຫ້ມີຄວາມສວຍສົດງົດງາມ, ມີການຈະເລີນເຕີບໂຕທີ່ອຸດົມສົມບູນ ແລະ ຍືນຍົງ;
3. ປູກຕົ້ນໄມ້ໃຫຍ່, ຕົ້ນໄມ້ປະດັບ ຫຼື ສ້າງໃຫ້ເປັນຮົ້ວສີຂຽວຕົບແຕ່ງດ້ວຍພືດພັນຫຼາກຫຼາຍຊະນິດທີ່ສວຍງາມກວມ 80% ຂອງລວງຍາວຕາມເສັ້ນທາງ.

**ມາດຕາ 15 ຕົວຊີ້ວັດຂອງສາທາລະນະສະຖານ ສີຂຽວ**

ສຳນັກງານອົງການ: ສະຖານທີ່ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ເປັນຕົ້ນ ສຳນັກງານ, ຫ້ອງການຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ສະຖານີຂົນສົ່ງ, ສະໜາມບິນ, ສະຖານທີ່ທ່ອງທ່ຽວ, ວັດ, ໂບດ, ສາສະນະສະຖານ, ໂຮງແຮມ, ເຮືອນພັກ, ຣີສອດ, ຮ້ານອາຫານ ຕ້ອງມີຕົ້ນໄມ້ໃຫ້ຮົ່ມ, ໄມ້ປະດັບ ທີ່ໄດ້ຈັດສັນຄຸ້ມຄອງ, ປະດັບປະດາ, ຕົບແຕ່ງ ສ້າງມູມສີຂຽວ ແລະ ສວນຫຍ້າທີ່ມີການຈັດສັນ ເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ສວຍງາມ ໃຫ້ກວມ 10% ຂອງເນື້ອທີ່ຂຶ້ນໄປ.

**ມາດຕາ 16 ຕົວຊີ້ວັດຂອງ ທີ່ຢູ່ອາໄສ ສີຂຽວ**

ທີ່ຢູ່ອາໄສ: ເຮືອນ, ອາພາດເມັ້ນ, ບ້ານຈັດສັນທີ່ນອນຢູ່ໃນເຂດຕົວເມືອງ, ເຂດຊານເມືອງ ແລະ ເຂດຂະຫຍາຍຕົວເມືອງ ຂອງນະຄອນຫຼວງວຽງຈັນ ຕ້ອງມີການປະດັບປະດາດ້ວຍໂຖດອກໄມ້ ຫຼື ເຕົ່າດອກໄມ້, ສວນຫຍ້າ-ສວນດອກໄມ້ ຕົບແຕ່ງເພື່ອໃຫ້ຮົ່ມເຢັນ ແລະ ຄວາມສວຍງາມ ກວມ 10% ຂອງເນື້ອທີ່ຂຶ້ນໄປ.

**ມາດຕາ 17 ຕົວຊີ້ວັດສວນສາທາລະນະ ສີຂຽວ**

1. ມີແຜນຜັງພື້ນທີ່ສີຂຽວ, ປູກຕົ້ນໄມ້, ດອກໄມ້ປະດັບ, ຫຍ້າໃຫ້ຄວາມຮົ່ມເຢັນ ມີອາກາດອັນບໍລິສຸດ ແລະ ເປັນແຫຼ່ງພັກຜ່ອນ ກວມ 65% ຂຶ້ນໄປຂອງເນື້ອທີ່ສວນສາທາລະນະ;
2. ມີລະບຽບການຄຸ້ມຄອງ, ມີປ້າຍສັນຍາລັກຕ່າງໆໃນເຂດສວນສາທາລະນະ;
3. ພະນັກງານ, ວິຊາການທີ່ກ່ຽວຂ້ອງ ຮັບຜິດຊອບເປັນເຈົ້າການ ຄຸ້ມຄອງ ແລະ ພັດທະນາສວນສາທາລະນະ ສີຂຽວ.

**ມາດຕາ 18 ຕົວຊີ້ວັດໂຮງຈັກ-ໂຮງງານສີຂຽວ**

1. ມີແຜນຜັງການຈັດສັນພື້ນທີ່ສີຂຽວ, ຕ້ອງມີຕົ້ນໄມ້ໃຫ້ຮົ່ມ, ໄມ້ໃຫ້ໝາກ ແລະ ໄມ້ປະດັບ;

2. ພື້ນທີ່ ສີຂຽວ ກວມ 20% ຂອງເນື້ອທີ່ໂຮງຈັກ-ໂຮງງານ;

3. ມີການຈັດຕັ້ງການຄຸ້ມຄອງ, ບົວລະບັດຮັກສາພື້ນທີ່ສີຂຽວ, ຕົ້ນໄມ້ໃຫ້ຮົ່ມ, ໄມ້ໃຫ້ໝາກ ແລະ ໄມ້ປະດັບໃຫ້ຈະເລີນເຕີບໂຕດີ ແລະ ຍືນຍົງ.

**ມາດຕາ 19 ຕົວຊີ້ວັດສວນປູກໄມ້ ແລະ ປ່າທຳມະຊາດ ສີຂຽວ**

**1. ສວນປູກໄມ້ສີຂຽວ:**

1) ເປັນສວນ ທີ່ໄດ້ມີການຂຶ້ນທະບຽນຖືກຕ້ອງ ຕາມກົດໝາຍວ່າດ້ວຍປ່າໄມ້, ດຳລັດ 247/ລບ, ລົງວັນທີ 20/08/2019 ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ;

2) ເປັນສວນປູກໄມ້ອຸດສາຫະກຳ, ໄມ້ໃຫ້ໝາກ ແລະ ອື່ນໆ;

3) ຕົ້ນໄມ້ຕ້ອງມີອາຍຸ 3 ປີ ແລະ ມີອັດຕາຫຼອດຕາຍ ກວມ 70% ຂຶ້ນໄປ;

4) ພະນັກງານ, ກຳມະກອນ ພາຍໃນສວນປູກ ໄດ້ຮັບການສຶກສາ, ຝຶກອົບຮົມເຕັກນິກວິຊາການ ຈາກອົງການທີ່ກ່ຽວຂ້ອງ ມີການຈັດຕັ້ງຄຸ້ມຄອງ, ບົວລະບັດຮັກສາ ສວນປູກໄມ້ໃຫ້ຈະເລີນເຕີບໂຕດີ ແລະ ຍືນຍົງ.

**2. ປ່າໄມ້ທຳມະຊາດ ສີຂຽວ:**

1) ເປັນພື້ນທີ່ປ່າທຳມະຊາດ ທີ່ໄດ້ຂຶ້ນທະບຽນ ຫຼື ປະກາດຮັບຮອງ ໃຫ້ເປັນປ່າສະຫງວນ, ປ່າປ້ອງກັນ, ປ່າຊົມໃຊ້ທີ່ເປັນປ່າສະຫງວນ... ປ່າຊົມໃຊ້ຂອງບ້ານ ທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍປ່າໄມ້, ດຳລັດ 247/ລບ, ລົງວັນທີ 20/08/2019 ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ;

2) ປ່າໄມ້ທຳມະຊາດ, ປ່າສະຫງວນ, ປ່າປ້ອງກັນ, ປ່າຊຸ້ກສິດ, ປ່າຜະລິດ-ປ່າຊົມໃຊ້ຂອງບ້ານ ມີເນື້ອທີ່ 0,5 ເຮັກຕາຂຶ້ນໄປ;

3) ມີໜ່ວຍງານຂອງລັດ, ເອກະຊົນ ແລະ ຊຸມຊົນ ຄຸ້ມຄອງ, ປົກປັກຮັກສາ ໃຫ້ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ;

4) ຊຸມຊົນທີ່ອາໄສຢູ່ໃນເຂດໃກ້ຄຽງ ໄດ້ຮັບການສຶກສາອົບຮົມ, ປູກຈິດສຳນຶກກ່ຽວກັບການປົກປັກຮັກສາ, ຄຸ້ມຄອງ ແລະ ນຳໃຊ້ປ່າດັ່ງກ່າວໃຫ້ມີຄວາມຍືນຍົງ.

**ມາດຕາ 20 ຄາດໝາຍບັນລຸຂອງແຕ່ລະເປົ້າໝາຍ**

ການສ້າງພື້ນທີ່ສີຂຽວໃນແຕ່ລະປະເປົ້າໝາຍ ຕ້ອງບັນລຸຄາດໝາຍ ດັ່ງນີ້:

1. ເສັ້ນທາງ ໃຫ້ບັນລຸ 70% ຂອງເປົ້າໝາຍ ຊຶ່ງປະກອບມີ:

- ປູກຕົ້ນໄມ້ໃຫ້ຮົ່ມ, ໄມ້ໃຫ້ໝາກ ແລະ ໄມ້ປະດັບຕາມເສັ້ນທາງຫຼວງແຫ່ງຊາດ ທີ່ຢູ່ໃນຂອບເຂດນະຄອນຫຼວງວຽງຈັນ ໃຫ້ກວມ 70% ຂອງລວງຍາວຂອງເສັ້ນທາງ ຊຶ່ງປະກອບດ້ວຍ: ທາງເລກທີ 10 ໄລຍະທາງ 29 ກິໂລແມັດ; ທາງເລກທີ 11 ໄລຍະທາງ 20 ກິໂລແມັດ; ທາງເລກທີ 13 ໃຕ້ ໄລຍະທາງ 36 ກິໂລແມັດ ແລະ ທາງເລກທີ 13 ເໜືອ ໄລຍະທາງ 30 ກິໂລແມັດ;

- ປູກຕົ້ນໄມ້ໃຫ້ຮົ່ມ, ໄມ້ໃຫ້ໝາກ ແລະ ໄມ້ປະດັບຕາມເສັ້ນທາງສາຍຫຼັກທີ່ສ້າງໃໝ່ ໃຫ້ກວມ 80% ຂອງລວງຍາວຂອງເສັ້ນທາງ ຊຶ່ງປະກອບມີ ເສັ້ນທາງຫຼັກທີ່ຈະຕັດໃໝ່ (ເສັ້ນທາງດອນກອຍ-ທາງ 450 ປີ, ນາຄູນນ້ອຍ-ບ້ານຈຳປາ, ດົງນາທອງ-ໜອງພະຍາ, ສີເກີດ-ບ້ານໜອງດາ, ນາຄູນນ້ອຍ-ເຂດໄຟແດງ ໜອງບຶກ, ບ້ານໜອງທາໃຕ້-ເຂດບ້ານປາກທ້າງ ແລະ ບ້ານນາຄວາຍໃຕ້-ເຂດບ້ານທ່າພະ);

- ປູກຕົ້ນໄມ້ໃຫ້ຮົ່ມ, ໄມ້ໃຫ້ໝາກ ແລະ ໄມ້ປະດັບຕາມເສັ້ນທາງເຊື່ອມຕໍ່ໃໝ່ ໃຫ້ກວມ 80% ຂອງລວງຍາວຂອງເສັ້ນທາງ ຊຶ່ງປະກອບມີ ເສັ້ນທາງທີ່ມີການເຊື່ອມຕໍ່ໃໝ່(ນາຄວາຍ-ຫຼັກ 21, ດອນໜູນ -ນາຄູນນ້ອຍ, ຊຳເກດ-ຫ້ວຍຫົງ, ໜອງພະຍາ-ຄຳຮຸ່ງ, ສາມແຍກສະໜາມກິລາຊີເກມ ບ້ານໂຊກໃຫຍ່-ເຂດບ້ານໂຊກນ້ອຍ);

- ປູກຕົ້ນໄມ້ໃຫ້ຮົ່ມ, ໄມ້ໃຫ້ໝາກ ແລະ ໄມ້ປະດັບຕາມເສັ້ນທາງຮ່ອມໃຫ້ກວມ 60% ຂອງລວງຍາວຂອງເສັ້ນທາງ ຊຶ່ງປະກອບມີ ເສັ້ນທາງຮ່ອມຂອງບ້ານໃນເຂດເທດສະບານ ໃຫ້ກວມ 60% ຂອງໄລຍະລວງຍາວທາງຮ່ອມ ລວມທັງໃຫ້ປະຊາຊົນ ປູກຕົ້ນໄມ້ປະດັບໃສ່ທີ່ດິນທີ່ເຂົາເຈົ້າເປັນເຈົ້າຂອງສິດນຳໃຊ້ທີ່ດິນດັ່ງກ່າວ.

2. ສ້າງສຳນັກງານອົງການ ແລະ ທີ່ຢູ່ອາໄສ ຕ້ອງບັນລຸ 60% ຂອງເປົ້າໝາຍ;

3. ສ້າງສວນສາທາລະນະສີຂຽວ ຕ້ອງບັນລຸ 70% ຂອງເນື້ອທີ່ສວນ;

4. ສ້າງສວນປູກ ແລະ ປ່າໄມ້ທຳມະຊາດ ສີຂຽວ ຕ້ອງບັນລຸ 60%;

- ປົກປັກຮັກສາປ່າສະຫງວນແຫ່ງຊາດ 02 ແຫ່ງ, ເນື້ອທີ່ 74.000 ເຮັກຕາ (ພູພະນັງ ແລະ ພູເຂົາຄວາຍ), ປ່າສະຫງວນ ແລະ ປ່າປ້ອງກັນຂັ້ນນະຄອນຫຼວງວຽງຈັນ, ເນື້ອທີ່ 498 ເຮັກຕາ, ຂັ້ນເມືອງ 228 ເຮັກຕາ ແລະ ຂັ້ນບ້ານ 580 ເຮັກຕາ ໃຫ້ມີລະບົບນິເວດທຳມະຊາດອຸດົມສົມບູນ, ຍືນຍົງ ເປັນແຫຼ່ງສຶກສາຄົ້ນຄ້ວາວິທະ ຍາສາດ ຊະນິດພັນພືດ, ສັດນ້ຳ-ສັດປ່າ;

- ສວນປູກໄມ້ເປັນສິນຄ້າ ໃຫ້ໄດ້ 100 ເຮັກຕາ ຕໍ່ປີ;

- ປູກພືດໝູນວຽນໃສ່ຂອບເຂດດິນຂອງຕົນໃຫ້ໄດ້ 10% ຂອງພື້ນທີ່ ແລະ ໃຫ້ກວມ 60% ຂອງຈຳນວນບ້ານໃນເທດສະບານ;

- ຂຶ້ນທະບຽນຕົ້ນໄມ້ປູກ, ສວນປູກໄມ້ອຸດສາຫະກຳ ແລະ ຕົ້ນໄມ້ທີ່ເກີດຂຶ້ນເອງຕາມທຳມະຊາດ ຫຼື ຕົ້ນໄມ້ດັ່ງເດີມ ທີ່ຢູ່ໃນເຂດເທດສະບານ ຫຼື ໃນທີ່ດິນຂອງບຸກຄົນ, ນິຕິບຸກຄົນ ສະເລ່ຍໃຫ້ໄດ້ 60% ຂອງສວນປູກ ແລະ ຕົ້ນໄມ້ທີ່ເກີດຂຶ້ນເອງຕາມທຳມະຊາດ ຫຼື ຕົ້ນໄມ້ດັ່ງເດີມໃນເທດສະບານ.

5. ການສ້າງໂຮງຈັກ-ໂຮງງານສີຂຽວ ຕ້ອງບັນລຸ 60% ໂດຍສຸມໃສ່ເຂດເສດຖະກິດສະເພາະ, ເຂດເສດຖະກິດພິເສດ ແລະ ນິຄົມອຸດສາຫະກຳເປັນຕົ້ນຕໍ.

## ໝວດທີ 4
## ອົງການຮັບຜິດຊອບ

### ມາດຕາ 21 ອົງການຄຸ້ມຄອງຈັດຕັ້ງປະຕິບັດ

ອົງການປົກຄອງນະຄອນຫຼວງວຽງຈັນ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ສ້າງນະຄອນຫຼວງວຽງຈັນສີຂຽວ ໂດຍມີການແຕ່ງຕັ້ງໜ່ວຍງານຮັບຜິດຊອບ ແລະ ປະສານສົມທົບກັບຂະແໜງທີ່ກ່ຽວຂ້ອງ ດັ່ງລຸ່ມນີ້:

1) ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ;

2) ພະແນກກະສິກຳ ແລະ ປ່າໄມ້;

3) ພະແນກໂຍທາທິການ ແລະ ຂົນສົ່ງ;

4) ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ;

5) ຂະແໜງການອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງແຕ່ລະອົງການ**

**1. ອົງການປົກຄອນຫຼວງວຽງຈັນ:**

1) ປະສານງານກັບບັນດາກະຊວງ, ອົງການຂອງສູນກາງທີ່ກ່ຽວຂ້ອງ ໃນຖານະເປັນຜູ້ຄຸ້ມຄອງມະຫາພາກ, ຕິດຕາມ, ກວດກາ ແລະ ຊຸກຍູ້ຂະແໜງການສາຍຕັ້ງ ປະຈຳນະຄອນຫຼວງວຽງຈັນ ໃນການຈັດຕັ້ງປະຕິບັດຕາມແຕ່ລະໜ້າວຽກ ທີ່ຕົນເອງຮັບຜິດຊອບ;

2) ນຳພາຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍການສ້າງນະຄອນຫຼວງວຽງຈັນສີຂຽວ;

3) ຊີ້ນຳນຳພາ ແລະ ຄວບຄຸມ ການຈັດຕັ້ງປະຕິບັດຕໍ່ພະແນກການ, ອົງການອ້ອມຂ້າງນະຄອນຫຼວງ ແລະ ອົງການຈັດຕັ້ງຂັ້ນເມືອງ ໃຫ້ເປັນເອກະພາບທົ່ວນະຄອນຫຼວງວຽງຈັນ;

4) ປຸກລະດົມພະນັກງານ, ລັດຖະກອນ, ນັກຮຽນຮູ້ປັນຍາຊົນ ແລະ ປະຊາຊົນບັນດາເຜົ່າໃຫ້ເຂົ້າ ໃຈ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂອງຂໍ້ຕົກລົງສະບັບນີ້;

5) ຊ່ວຍໝູນງົບປະມານເຂົ້າໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້;

6) ຕິດຕາມ, ກວດກາ ສະຫຼຸບ, ຕີລາຄາ ແລະ ລາຍງານຜົນການຈັດຕັ້ງປະຕິບັດໃຫ້ສະພາປະຊາຊົນ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ.

**2 ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:**

1) ຮັບຜິດຊອບໃນການຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ໃນການຄຸ້ມຄອງລວມ ດ້ານສິ່ງແວດລ້ອມ (ສ ສີຂຽວ), ໂຄສະນາເຜີຍແຜ່ ສ້າງຈິດສຳນຶກໃຫ້ທົ່ວສັງຄົມຮັບຮູ້, ເປັນເຈົ້າການໃນການຈັດຕັ້ງປະຕິບັດ;

2) ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ສ້າງນະຄອນຫຼວງວຽງຈັນສີຂຽວ;

3) ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດ ທັງ 6 ເປົ້າໝາຍທີ່ໄດ້ກຳນົດໄວ້ ເພື່ອສ້າງນະຄອນຫຼວງວຽງຈັນສີຂຽວ;

4) ນຳສະເໜີອົງການປົກຄອງນະຄອນຫຼວງວຽງຈັນ ເພື່ອອອກໃບຢັ້ງຢືນຮັບຮອງ ແລະ ໃຫ້ການຍ້ອງຍໍຜູ້ດີເດັ່ນປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ;

5) ສະຫຼຸບ ຕີລາຄາ, ປະເມີນຜົນ ແລະ ຖອດຖອນບົດຮຽນ.

**3 ພະແນກກະສິກຳ ແລະ ປ່າໄມ້:**

ຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດ ຄື: ການສະໜອງເບ້ຍໄມ້, ການຜະລິດເບ້ຍໄມ້, ສ້າງສວນກ້າເບ້ຍໄມ້ (ສວນພໍ່-ແມ່ພັນໄມ້), ເຕັກນິກ-ວິຊາການໃນການປູກຕົ້ນໄມ້, ການຄຸ້ມຄອງ, ປົກປັກຮັກສາຕົ້ນໄມ້ທີ່ປູກໃໝ່, ອອກອະນຸຍາດຕັດຕົ້ນໄມ້, ມີສິດປັບໄໝຕໍ່ຜູ້ກະທຳຜິດ, ທຳລາຍຕົ້ນໄມ້ປູກ ການຂຶ້ນທະບຽນຕົ້ນໄມ້ສວນປູກ, ຕົ້ນໄມ້ທີ່ເກີດຂຶ້ນເອງຕາມທຳມະຊາດ ຫຼື ຕົ້ນໄມ້ດັ້ງເດີມຢູ່ໃນເຂດນອກເທດສະບານ ໃຫ້ເປັນລະບົບ ແລະ ກາຍເປັນພື້ນທີ່ສີຂຽວ;

**4 ພະແນກໂຍທາທິການ ແລະ ຂົນສົ່ງ:**

ຮັບຜິດຊອບໂດຍກົງ ໃນການຈັດຕັ້ງປະຕິບັດເປົ້າໝາຍ ສ້າງເສັ້ນທາງ ແລະ ສ້າງສວນສາທາລະນະສີຂຽວ ກຳນົດແຜນຂະຫຍາຍເສັ້ນທາງ, ກຳນົດແຜນຜັງສ້າງສວນສາທາລະນະ, ກຳນົດຂອບເຂດເພື່ອປູກຕົ້ນໄມ້ຕາມເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງສາຍຫຼັກ, ເສັ້ນທາງເຊື່ອມຕໍ່, ເສັ້ນທາງຮ່ອມຂອງບ້ານ, ສຳລັບເສັ້ນທາງທີ່ຈະກໍ່ສ້າງໃໝ່ ແມ່ນໃຫ້ກຳນົດແຜນການປູກໄມ້ເຂົ້າໃນແຜນຜັງກໍ່ສ້າງເສັ້ນທາງນັ້ນເລີຍລວມທັງງົບປະມານຂອງການປູກຕົ້ນໄມ້ ກໍໃຫ້ບັນຈຸເຂົ້າໃນມູນຄ່າລວມຂອງເສັ້ນທາງ;

**5 ຫ້ອງການຄຸ້ມຄອງ ແລະ ບໍລິຫານຕົວເມືອງ:**

1) ຮັບຜິດຊອບປູກຕົ້ນໄມ້, ໄມ້ປະດັບ ແລະ ສວນຫຍ້າ ເພື່ອເພີ່ມພື້ນທີ່ສີຂຽວບັນດາບ້ານໃນເຂດເທດສະບານ;

2) ຮັບຜິດຊອບໂດຍກົງ ໃນການຈັດຕັ້ງປະຕິບັດການຄຸ້ມຄອງ ປົກປັກຮັກສາ, ການຕັດຮອນກິ່ງງ່າ, ຕົບແຕ່ງຕົ້ນໄມ້, ອະນາໄມເກັບມ້ຽນກິ່ງງ່າໄມ້ ແລະ ຕົ້ນໄມ້ຫັກ ໃນເຂດເທດສະບານ ຈຳນວນ 300 ຄຸ້ມບ້ານ;

3) ປະສານສົມທົບ ແລະ ອຳນວຍຄວາມສະດວກໃຫ້ຂະແໜງການທີ່ກ່ຽວຂ້ອງ ໃນການຕັດແຕ່ງຕົ້ນໄມ້, ປະດັບປະດາຕົ້ນໄມ້ຕາມເສັ້ນທາງ, ສຳນັກງານ, ອົງການ ແລະ ຕາມສວນສາທາລະນະຕ່າງໆ;

4) ຮັບຜິດຊອບສ້າງປ້າຍສັນຍາລັກຢູ່ພາຍໃນສວນສາທາລະນະ;

5) ຮັບຜິດຊອບຂຶ້ນທະບຽນຕົ້ນໄມ້ປູກໃນເຂດເທດສະບານ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**6 ອົງການປົກຄອງເມືອງ:**

ຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດ, ນຳພາສ້າງເທດສະບານ, ສຳນັກງານ, ບ້ານ ແລະ ສະຖານທີ່ສີຂຽວໃນຂອບເຂດເມືອງຂອງຕົນ, ເປັນເຈົ້າການໂຄສະນາເຜີຍແຜ່, ປູກຈິດສຳນຶກ ແລະ ຂົນຂວາຍພົນລະເມືອງຂອງຕົນ ເປັນເຈົ້າການນຳພາປະຕິບັດຄາດໝາຍແຜນພັດທະນາ ສະຖານທີ່ສີຂຽວພາຍໃນເມືອງ ໃຫ້ສຳເລັດຕາມຄາດໝາຍ.

**7 ອົງການປົກຄອງບ້ານ:**

1) ນຳພາປະຊາຊົນພາຍໃນບ້ານຮັບຜິດຊອບໃນການປູກ, ບົວລະບັດຮັກສາຕົ້ນໄມ້ ໃຫ້ຈະເລີນໃຫຍ່ ຕາມເສັ້ນທາງຮ່ອມ ແລະ ສະຖານທີ່ຕ່າງໆພາຍໃນບ້ານ ໃຫ້ມີຄວາມຍືນຍົງ ແລະ ບັນລຸຄາດໝາຍໜ້າວຽກທີ່ສຳຄັນຕາມແຜນພັດທະນາບ້ານສີຂຽວ;

2) ໂຄສະນາເຜີຍແຜ່, ປຸກຈິດສຳນຶກໃຫ້ປະຊາຊົນ, ລູກຫຼານ ທີ່ຢູ່ພາຍໃນບ້ານຂອງຕົນໄດ້ເຊື່ອມຊຶມ, ເຂົ້າໃຈເຖິງຄຸນຄ່າ ຄວາມສຳຄັນຂອງຕົ້ນໄມ້ ແລະ ເຂົ້າຮ່ວມຂະບວນການສ້າງບ້ານສີຂຽວ;

3) ປຸກລະດົມປະຊາຊົນ, ພໍ່ຄ້າຊາວຂາຍ, ຜູ້ພັກພາອາໃສຢູ່ພາຍໃນບ້ານ ປະກອບສ່ວນດ້ານທຶນຮອນເຂົ້າຮ່ວມພັດທະນາ ບ້ານສີຂຽວ;

4) ເປັນເຈົ້າການຕິດຕາມ ກວດກາ, ຮ້ອງຟ້ອງ ຜູ້ທີ່ຕັດ ທຳລາຍຕົ້ນໄມ້ ແລະ ພື້ນທີ່ສີຂຽວໃນຂອບເຂດບ້ານຂອງຕົນ.

**8 ວິສາຫະກິດ ຫຼື ສະມາຄົມ ສີຂຽວ:**

ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ມີເງື່ອນໄຂ ສາມາດສ້າງເປັນວິສາຫະກິດ ຫຼື ສະມາຄົມສີຂຽວຂຶ້ນມາ ເພື່ອຮັບຜິດຊອບປູກຕົ້ນໄມ້, ຂະຫຍາຍພັນ, ປົກປັກຮັກສາ ແລະ ເພີ່ມພື້ນທີ່ສີຂຽວໃນນະຄອນຫຼວງ.

**9 ຫ້ອງການຕ່າງໆຂັ້ນເມືອງ:**

ຫ້ອງການຕ່າງໆທີ່ກ່ຽວຂ້ອງຂອງເມືອງ ຕ້ອງຮັບຜິດຊອບການຈັດຕັ້ງພັນຂະຫຍາຍ ຂໍ້ຕົກລົງສະບັບນີ້ ຕາມສິດ ແລະ ໜ້າທີ່ ຕາມສາຍຕັ້ງຂອງຕົນ.

**ມາດຕາ 23 ພັນທະຂອງຊາວນະຄອນຫຼວງວຽງຈັນ:**

1) ບົວລະບັດຮັກສາ ແລະ ປູກຕົ້ນໄມ້ ເພີ່ມພື້ນທີ່ສີຂຽວໜາແໜ້ນ ຕາມນະໂຍບາຍຂອງນະຄອນຫຼວງວຽງຈັນ ວາງອອກ;

2) ຕິດຕາມກວດກາ, ຊ່ວຍແຈ້ງຂໍ້ມູນໃຫ້ພາກລັດຊາບຕໍ່ຜູ້ທີ່ຕັດ ທຳລາຍຕົ້ນໄມ້ ແລະ ພື້ນທີ່ສີຂຽວ;

3) ພົນລະເມືອງຂອງນະຄອນຫຼວງວຽງຈັນ ທີ່ມີອາຍຸ 16 ປີຂຶ້ນໄປ ມີພັນທະປູກຕົ້ນໄມ້ ເພີ່ມພື້ນທີ່ສີຂຽວ ໃຫ້ໄດ້ 2 ຕົ້ນ/ຄົນ/ປີ;

4) ຂຶ້ນທະບຽນຕົ້ນໄມ້ທຳມະຊາດ, ຕົ້ນໄມ້ປູກ ແລະ ປະຕິບັດພັນທະ, ຈ່າຍຄ່າຊັບພະຍາກອນທຳມະຊາດ, ຄ່າທຳນຽມເຂົ້າໃນກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ກອງທຶນພັດທະນາປ່າໄມ້ ໃຫ້ສອດຄ່ອງຕາມລະບຽບການ ແລະ ກົດໝາຍ.

## ໝວດທີ 5
## ແຫຼ່ງລາຍຮັບ ແລະ ການນຳໃຊ້ງົບປະມານ

**ມາດຕາ 24 ແຫຼ່ງລາຍຮັບ**

ນະຄອນຫຼວງວຽງຈັນໄດ້ຈັດສັນ, ຄຸ້ມຄອງ ງົບປະມານໃນການສ້າງນະຄອນຫຼວງວຽງຈັນສີຂຽວ ໂດຍມີການຈັດສັນງົບປະມານແຫ່ງລັດປະຈຳປີ ດັ່ງນີ້:

1. ການສະເໜີຂໍທຶນສະໜັບສະໜູນ ຈາກກອງທຶນພັດທະນາຊັບພະຍາກອນປ່າໄມ້;
2. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
3. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ລວມທັງພາຍໃນ ແລະ ທຶນຈາກຕ່າງປະເທດ;
4. ລາຍຮັບຈາກການປັບໄໝຕໍ່ຜູ້ທີ່ລະເມີດ ຈາກການຕັດຕົ້ນໄມ້ ແລະ ທຳລາຍຕົ້ນໄມ້;

5. ລາຍຮັບອື່ນໆຕາມລະບຽບການ.

**ມາດຕາ 25 ການນຳໃຊ້ງົບປະມານ (ລາຍຈ່າຍ)**

ເຈົ້າຄອງ, ຮອງເຈົ້ານະຄອນຫຼວງວຽງຈັນ ແມ່ນມີສິດສັ່ງຈ່າຍ, ນຳໃຊ້ງົບປະມານເຂົ້າໃນການສ້າງນະຄອນຫຼວງວຽງຈັນສີຂຽວ ຕາມລະບຽບການ ແລະ ເປົ້າໝາຍ ບົນພື້ນຖານການນຳໃຊ້ງົບປະມານຂອງແຕ່ລະຂະແໜງການ ແລະ ແຜນການພັດທະນາໃນແຕ່ລະໄລຍະ:

1. ລາຍຈ່າຍເຂົ້າໃນເປົ້າໝາຍການສ້າງນະຄອນຫຼວງວຽງຈັນສີຂຽວ;

2. ລາຍຈ່າຍຄ່າປູກຕົ້ນໄມ້;

3. ລາຍຈ່າຍຄ່າຟື້ນຟູ ແລະ ປົກປັກຮັກສາຕົ້ນໄມ້;

4. ລາຍຈ່າຍໃນການໂຄສະນາ, ເຜີຍແຜ່, ຕິດຕາມກວດກາ ແລະ ປະເມີນຜົນ.

## ໝວດທີ 6
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 26 ຂໍ້ຫ້າມ**

1. ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ, ເຈດຕະນາ ທຳລາຍຕົ້ນໄມ້ໂດຍທາງກົງ ແລະ ທາງອ້ອມ ຫຼື ເຮັດໃຫ້ພື້ນທີ່ສີຂຽວຫຼຸດລົງ;

2. ຫ້າມຕັດ, ຍົກຍ້າຍຕົ້ນໄມ້ ທີ່ໄດ້ຂຶ້ນທະບຽນໂດຍບໍ່ໄດ້ຮັບອະນຸຍາດ;

3. ຫ້າມປູກຕົ້ນໄມ້ໃສ່ ພື້ນທີ່ທີ່ມີຄວາມສ່ຽງອາດຈະສ້າງຄວາມເສຍຫາຍຕໍ່ຊຸມຊົນ ແລະ ຜູ້ທີ່ຢູ່ອ້ອມຂ້າງ;

4. ຂໍ້ຫ້າມອື່ນໆ ຕາມທີ່ກຳນົດໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນ ທີ່ມີຜົນງານດີເດັ່ນປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຂັ້ນຕ່າງໆຕາມນະໂຍບາຍລວມທີ່ລັດຖະບານກຳນົດ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດລະບຽບການ, ຂໍ້ຫ້າມ ທີ່ລະບຸໄວ້ໃນຂໍ້ຕົກລົງ (ມາດຕາທີ 26) ຈະຖືກດຳເນີນການກ່າວເຕືອນ ແລະ ດຳເນີນຄະດີ ຕາມກໍລະນີໜັກ ຫຼື ເບົາ ດັ່ງນີ້:

ກໍລະນີ ການລະເມີດເປັນຄັ້ງທຳອິດ ແມ່ນຈະໄດ້ສຶກສາອົບຮົມ, ກ່າວເຕືອນ ພ້ອມທັງຂຽນບົດບັນທຶກ, ຮັບຜິດຊອບປູກທົດແທນ ແລະ ໃຊ້ແທນຄ່າເສຍຫາຍຂອງມູນຄ່າຕົ້ນໄມ້ທີ່ປູກ;

ກໍລະນີ ທີ່ມີການລະເມີດຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ຊຶ່ງໄດ້ຜ່ານການກ່າວເຕືອນ ຫຼື ສຶກສາອົບຮົມຜ່ານມາແລ້ວ ແມ່ນຈະຖືກປັບໄໝ ສາມເທົ່າຂອງມູນຄ່າຄວາມເສຍຫາຍຕາມອາຍຸຂອງຕົ້ນໄມ້ ແລະ ຊົດເຊີຍຕາມລາຄາຂອງທ້ອງຕະຫຼາດໃນປັດຈຸບັນ;

ກໍລະນີ ທີ່ມີການລະເມີດ ສາມຄັ້ງຂຶ້ນໄປ ຈະຖືກປັບໄໝຫ້າເທົ່າຂອງມູນຄ່າຄວາມເສຍຫາຍ ຕາມອາຍຸຂອງຕົ້ນໄມ້ ແລະ ຊົດເຊີຍຕາມລາຄາຂອງທ້ອງຕະຫຼາດໃນປັດຈຸບັນ ແລະ ຖ້າຮ້າຍແຮງ ຊຶ່ງເປັນການ

ກະທຳຜິດທາງອາຍາ ແມ່ນຈະໄດ້ດຳເນີນຄະດີ ແລະ ລົງໂທດຕາມກົດໝາຍວ່າດ້ວຍປ່າໄມ້ສະບັບປັບປຸງ ເລກທີ 64/ສພຊ, ລົງວັນທີ 13/06/2019 ມາດຕາ 168-173.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 29 ການຈັດຕັ້ງປະຕິບັດ

1. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍພາຍໃຕ້ການຊີ້ນຳຂອງທ່ານຮອງເຈົ້ານະຄອນຫຼວງວຽງຈັນ ຜູ້ຊີ້ນຳຂະແໜງການ ເປັນໃຈກາງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

2. ພະແນກການ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ແນວລາວສ້າງຊາດ, ສາຫະພັນແມ່ຍິງລາວ, ສາຫະພັນກຳມະບານລາວ ແລະ ຊາວໜຸ່ມປະຊາຊົນປະຕິວັດລາວ ປະຈຳນະຄອນຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ສິດ ໜ້າທີ່ຮັບຜິດຊອບຂອງຂະແໜງການຕົນໃຫ້ໄດ້ຮັບຜົນດີ;

3. ຊາວນະຄອນຫຼວງວຽງຈັນ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ ທີ່ອາໄສຢູ່ນະຄອນຫຼວງວຽງຈັນ ຈົ່ງຕື່ນຕົວມີສ່ວນຮ່ວມ ແລະ ປະຕິບັດພັນທະໜ້າທີ່ ໃນການສ້າງນະຄອນຫຼວງວຽງຈັນສີຂຽວ.

### ມາດຕາ 30 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

- ບ່ອນສົ່ງ:
- ເຈົ້າຄອງ-ຮອງເຈົ້າຄອງ ນວ 1 ສະບັບ
- ຫ້ອງວ່າການສູນກາງພັກ 1 ສະບັບ
- ຫ້ອງວ່າການສຳນັກງານນາຍົກ 1 ສະບັບ
- ຄະນະເລຂາທິການ ສພຊ 1 ສະບັບ
- ຫ້ອງການກະຊວງ ຊສ 1 ສະບັບ
- ຫ້ອງການກະຊວງ ກປ 1 ສະບັບ
- ຄະນະປະຈຳສະພາປະຊາຊົນ ນວ 1 ສະບັບ
- ບັນດາພາກສ່ວນທີ່ກ່ຽວຂ້ອງ 1 ສະບັບ
- ສຳເນົາ 2 ສະບັບ

ນະຄອນຫຼວງວຽງຈັນ
ເຈົ້າຄອງນະຄອນ

ປອ.ສິນລະວົງ ຄູດໄພທູນ